Savan PAD ຈົດໝາຍແຈ້ງຂ່າວ

31 ສິງຫາ, 2021 21

## ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (3)

ຕໍ່ຈາກສະບັບທີ່ 19 ແລະ 20, ພວກເຮົາແນໃສ່ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (ກປມ) ທີ່ກຳລັງເນັ້ນເລື່ອງເຕັກນິກການໃຫ້ຄຳແນະນຳ ແລະ ເປັນແນວທາງໃຫ້ກັບຊາວນາໃນລະດັບເມືອງ. ໃນເດືອນກໍລະກົດປີ 2021ນີ້, ໂຄງການສະຫວັນເຜດໄດ້ຂະຫຍາຍບ້ານເປົ້າໝາຍອອກເປັນ 12 ບ່ອນໃນ 9 ຕົວເມືອງໃນແຂວງສະຫວັນນະເຂດ. ນະຄອນໄກສອນພົມວິຫານ ແລະ ເມືອງທ່າປາງທອງຖືວ່າເປັນເມືອງທີ່ຖືກຄັດເລືອກດັບສອງຂອງໂຄງການເຊິ່ງໄດ້ເລີ່ມກິດຈະກຳຕັ້ງແຕ່ເດືອນມິຖຸນາປີ 2018 ເປັນຕົ້ນມາ.

## ກປມ ໄກສອນພົມວິຫານ

ໂຄງການເປົ້າໝາຍ : ໂພນສີມ






ທ່ານ ອຸ່ນຄຳ
ຫົວໜ້າ ກປມ ໄກສອນພົມວິຫານ

ນະຄອນໄກສອນຖືວ່າເປັນໃຈກາງຂອງແຂວງສະຫວັນນະເຂດ.ສະນັ້ນຈຶ່ງເປັນຍຸດທະສາດທີ່ສຳຄັນໃນການຜະລິດ ແລະ ຂາຍຜົນຜະລິດກະສິກຳ. ແຕ່ເດີມ ນະຄອນໄກສອນມີແຜນພັດທະນາກຸ່ມຜັກອິນຊີຈຳນວນ 4 ບ້ານເປົ້າໝາຍ ໃນນັ້ນມີພຽງກຸ່ມປູກຜັກຂອງບ້ານໂພນສີມທີ່ສາມາດສືບຕໍ່ປະຕິບັດໄດ້ພາຍໃຕ້ເງື່ອນໄຂຂອງການປູກຜັກອິນຊີ. ຍິ່ງໄປກ່ວານັ້ນ, ຫຼັງຈາກທີ່ກຸ່ມປູກຜັກອິນຊີບ້ານໂພນສີມຂອງພວກເຮົາໄດ້ຮັບເຕັກນິກ ແລະ ລົດຮຽນຈາກໂຄງການ ສະຫວັນເຜັດ, ຈຶ່ງເຮັດໃຫ້ກຸ່ມໂພນສີມມີຈຸດແຂງຂຶ້ນຕື່ມກໍ່ຄືມີຊ່ອງທາງການຂາຍຫຼາຍກ່ວາເກົ່າ ແລະ ເຮັດໃຫ້ພວກເຮົາມີຄວາມກະຕືລືລົ້ນສູງໃນການຜະລິດ ແລະ ຕອບສະໜອງກັບຕະຫຼາດ ແຕ່ກໍ່ຍັງບໍ່ພຽງພໍ. ສະນັ້ນ, ພວກເຮົາຍັງຕ້ອງການບົດຮຽນອີກຫລາຍຢ່າງ ແລະ ຫວັງວ່າຈະນຳເອົາຄວາມຮູ້ໄປສອນຊາວນາເຂດອື່ນໄດ້.

### ພາບລວມ

ໄກສອນພົມວິຫານແມ່ນເມືອງຫຼວງຂອງແຂວງສະຫວັນນະເຂດ ແລະ ຕັ້ງຢູ່ໃກ້ກັບເຂດເສດຖະກິດທີ່ໃຫຍ່ທີ່ສຸດໃນແຂວງ. ພ້ອມກັບຄຳວ່າ, “ຈາກ‘ ປູກ ແລະ ຂາຍ’ ມາເປັນ ‘ປູກເພື່ອຂາຍ’ ”, ໂຄງການສະຫວັນເຜດແມ່ນເນັ້ນໜັກໃນການຊ່ວຍເຫຼືອໃນດ້ານການຕະຫຼາດເພື່ອປັບປຸງທັກສະຂອງຊາວກະສິກອນໃນດ້ານການຜະລິດ ແລະ ການຂາຍຂອງຜັກປອດໄພ ແລະ ຜັກອິນຊີ.



ພະນັກງານ ກປມ ໄກສອນລົງຢ້ຽມຢາມກຸ່ມຊາວນາບ້ານໂພນສີມ

### ດ້ານການຕະຫຼາດ / ກິດຈະກຳການປູກພືດສວນຢູ່ໂພນສີມ



ຊາວສວນຂອງເຂດອື່ນກຳລັງສັງເກດການ ການຂາຍຜັກຂອງກຸ່ມຊາວສວນບ້ານໂພນສີມ

- ກຸ່ມປູກຜັກອິນຊີໂພນສີມມີຊາວນາຈາກເຂດອື່ນມາຢ້ຽມຊົມເພື່ອສັງເກດສວນຂອງພວກເຂົາຢູ່ເປັນປະຈຳ ຫຼືວ່າ ການຝຶກອົບຮົມແບບນຳຊາວນາໄປຫາຊາວນາ (Farmer-to-Farmer-training) ເນື່ອງຈາກວ່າກຸ່ມປູກຜັກດັ່ງກ່າວເປັນຜູ້ນຳໃນດ້ານການຜະລິດພືດສວນພາຍໃຕ້ການຊີ້ນຳຂອງໂຄງການສະຫວັນເຜັດ.
- ຈຳນວນສະມາຊິກກຸ່ມປູກຜັກໄດ້ເພີ່ມຂຶ້ນ:
  6 ຄົວເຮືອນ (ໃນປີ 2018) → 23 ຄົວເຮືອນ (ໃນປີ 2021).
- ຂະຫຍາຍການຂາຍຜັກອິນຊີຢ່າງກ້ວາງຂວາງ:ຮ້ານຂາຍຜັກຂອງບ້ານໂພນສີມເອງ, ຕະຫຼາດຜັກໃນເຂດເທດສະບານເມືອງ, ຮ້ານອາຫານ ແລະ ອື່ນໆ.
- ເຮັດໜ້າທີ່ໃນການເຊື່ອມຕໍ່ລະຫວ່າງກຸ່ມຊາວນາຜູ້ປູກຜັກໃນພື້ນທີ່ອື່ນໆລວມທັງເປັນສູນກາງໃນການຈຳໜ່າຍໃຫ້ກັບລູກຄ້າ.
- ປະຈຸບັນໄດ້ສຸມໃສ່ການຜະລິດແບບເປັນກຸ່ມເພື່ອສະໜອງຜັກທີ່ມີສະຖຽນລະພາບສູງສູ່ຕະຫຼາດ.

# ກປມ ເມືອງທ່າປາງທອງ

ໂຄງການເປົ້າໝາຍ : ເຊສາລະລອງ



ຣ. ທ່ານ ສອນຄຳ
ຣ.ຫົວໜ້າ ກປມ ເມືອງທ່າປາງ




ເມືອງທ່າປາງທອງຖືວ່າມີຈຸດພົ້ນເດັ່ນທີ່ສຸດແມ່ນຊົນລະປະທານຈາກເຂື່ອນເຊສາລະລອງ. ຊົນລະປະທານທີ່ບໍ່ຈຳເປັນຕ້ອງໃຊ້ຈັກສູບນ້ຳໃນການຂົນສົ່ງນ້ຳຫາເນື້ອທີ່ນາ. ດັ່ງນັ້ນ, ຕົ້ນທຶນການຜະລິດຈຶ່ງຕ່ຳເພາະວ່າບໍ່ໄດ້ຈ່າຍຄ່າກະແສໄຟຟ້າ, ແຕ່ຜົນຜະລິດຂອງພວກເຮົາກໍ່ຍັງບໍ່ທັນໄດ້ດີເທົ່າທີ່ຄວນຖ້າທຽບໃສ່ກັບບັນດາເມືອງທີ່ນອນໃນເຂດເປົ້າໝາຍຂອງໂຄງການສະຫວັນເຜັດ. ດັ່ງນັ້ນ, ຖ້າມີໂອກາດພວກເຮົາຢາກຮຽນຮູ້ ແລະ ຖອດຖອນບົດຮຽນທາງດ້ານເຕັກນິກຈາກເມືອງອື່ນໆທີ່ປະສົບຜົນສຳເລັດ ແລະ ຢາກເຂົ້າຮ່ວມຝຶກອົບຮົມທາງດ້ານເຕັກນິກວິຊາການເພາະວ່າພວກເຮົາມີຊົນລະປະທານແລ້ວ ຍັງເຫຼືອແຕ່ການນຳໃຊ້ໃຫ້ເກີດປະສິດທິຜົນ.

## ດ້ານເຕັກນິກກະສິກຳ (ການປູກເຂົ້າ)

- ນະໂຍບາຍກູ້ຢືມໄດ້ຈັດແລ້ວ 5 ຄັ້ງມີຜູ້ເຂົ້າຮ່ວມທັງໝົດ 364 ຄົວເຮືອນ (ເກືອບທັງໝົດຄົວເຮືອນໃນບ້ານເປົ້າໝາຍ). ໃນປະຈຸບັນນີ້, ນະໂຍບາຍຄັ້ງທີ 6 ກຳລັງດຳເນີນການ.
- ສະມັດຕະພາບໃນບ້ານເປົ້າໝາຍໄດ້ເພີ່ມຂຶ້ນ 14%*.

*ຜົນຂອງການສຳພາດຊາວນາ: ນາປີ 2018 ແລະ 2020.

- ທົດລອງການຜະລິດເມັດພັນເຂົ້າເນື່ອງຈາກວ່າເຂດນີ້ເປັນເຂດຫ່າງໄກສອກຫຼີກຍາກຕໍ່ການເຂົ້າເຖິງເມັດພັນທີ່ມີຄຸນນະພາບ.

## ດ້ານຊົນລະປະທານ / ສ້າງຄວາມເຂັ້ມແຂງໃຫ້ກຸ່ມນຳໃຊ້ນ້ຳ

- ກຸ່ມນຳໃຊ້ນ້ຳພະຍາຍາມແກ້ໄຂບັນຫາ ແລະ ປັບປຸງການຈັດການນ້ຳ ຜ່ານກອງປະຊຸມກຸ່ມຜູ້ນຳໃຊ້ນ້ຳທີ່ໄດ້ຈັດຂຶ້ນຫຼາຍກວ່າເດືອນລະສອງຄັ້ງ.
- ກຸ່ມນຳໃຊ້ນ້ຳ ແລະ ຊາວນາແມ່ນມີຄວາມເຂົ້າໃຈດີກ່ຽວກັບການເກັບເງິນຄ່ານ້ຳ. ປະຈຸບັນອັດຕາການເກັບແມ່ນ 100%
- ການຂະຫຍາຍເນື້ອທີ່ຊົນລະປະທານໃນໂຄງການເປົ້າໝາຍ:

285 ຮຕ → 861,2 ຮຕ* (3 ເທົ່າ)

*ການສົມທຽບນາແຊງລະຫວ່າງປີ 2017-18 ແລະ ປີ 2020-21.




- ພະນັກງານ ກປມ ໄດ້ເຮັດວຽກໃນການວັດແທກເນື້ອທີ່ໂດຍການນຳໃຊ້ຈີພີເອັດເພື່ອສ້າງແຜນທີ່ຊົນລະປະທານໃຫ້ແມ້ນຍຳເນື້ອທີ່ຈິງ ເພື່ອສະດວກໃນການເກັບຄ່ານ້ຳ. ວຽກງານດັ່ງກ່າວສຳເລັດໄດ້ດ້ວຍຄວາມກະຕືລືລົ້ນ ແລະ ຫ້າວຫັນຂອງພະນັກງານ.

## ດ້ານການຕະຫຼາດ / ການປູກພືດສວນ

- ກຸ່ມປູກຜັກປອດໄພໄດ້ສ້າງຕັ້ງຂຶ້ນໃນປີ 2019 ສ້າງຕັ້ງຂຶ້ນໂດຍຊາວນາທີ່ປູກຜັກໃນເຂດນັ້ນ. ສະຖານະການຂາຍຜັກຂອງຊາວນາແມ່ນຢູ່ໃນເກນທີ່ດີ 2-4 ເທົ່າ ເພີ່ມຂຶ້ນ.

(ການສົມທຽບ: ກ່ອນການສະໜັບສະໜຸນຂອງໂຄງການ ແລະ ປີ 2020.

- ໃນປີ 2018 ໄດ້ສ້າງເຮືອນຮົ່ມ 8 ຫຼັງ(ບ່ອນປູກຜັກ)ໃນພື້ນທີ່ໂຄງການເປົ້າໝາຍ. ປະຈຸບັນກຳລັງສ້າງເພີ່ມອີກ ແລະ ຈຳນວນທັງໝົດຈະຕົກເປັນ 27 ຫຼັງ.
- ຄວາມຮັບຮູ້ຂອງຊາວນາເພີ່ມຂຶ້ນຢ່າງເຫັນໄດ້ຊັດເຈນຜ່ານການທັດສະນະສຶກສາ ແລະ ການຈັດຝຶກແບບນຳຊາວນາໄປຫາຊາວນາທີ່ຈັດຂຶ້ນໂດຍໂຄງການ.



ຊາວນາຮຽນຮູ້ ແລະ ປະຕິບັດໂຕຈິງການເຮັດຝຸ່ນບົ່ມ

## ພາບລວມ

ເຖິງວ່າເມືອງທ່າປາງທອງຢູ່ຫ່າງໄກຈາກຈຸດໃຈກາງແຂວງ, ແຕ່ກໍ່ຈັດຢູ່ໃນຂັ້ນຕອນການພັດທະນາເຊັ່ນ: ການປັບປຸງເສັ້ນທາງທີ່ສາມາດໄປຮອດແຂວງສາລາວັນ, ການກໍ່ສ້າງສູນກະສິກຳ ແລະ ອື່ນໆ.

ໂຄງການເປົ້າໝາຍ, ເຊສາລະລອງ, ມີເນື້ອທີ່ກະສິກຳທີ່ກ້ວາງຂວາງ(2,000 ຮຕ)ຢູ່ລຸ່ມເຂື່ອນໃຫຍ່. ນັ້ນເປັນເຂດ ເຂດໜຶ່ງ ທີ່ມີຄວາມຄາດຫວັງສູງຕໍ່ການພັດທະນາຂອງແຂວງ.


ຈົດໝາຍແຈ້ງຂ່າວຂອງໂຄງການ ສະຫວັນເຜັດ
ໂຄງການພັດທະນາ ກະສິກຳ ແບບມີສ່ວນຮ່ວມ ແຂວງສະຫວັນນະເຂດ (ສະຫວັນເຜັດ)
ຕູ້ ປ.ນ. 16, ຂະແໜງຊົນລະປະທານ, ພະແນກ ກະສິກຳ ແລະ ປ່າໄມ້ ແຂວງສະຫວັນນະເຂດ, (ໂທ : 041-252497)